# ໂຮງຮຽນວັນອາທິດ

**ວັນອາທິດ ທີ 21, ມີນາ 2010 (3/21/2010)**

---

## ເມື່ອສະມາຊິກຢືນຢັນວ່າຕົນເອງຖືກ.

**<u>ຂໍ້ພຣະຄັມພີໃນບົດຮຽນ:</u>** 1 ໂກຣິນໂທ 8:1-4, 7-13; 10: 31-33

**<u>ຜົນສະທ້ອນຕໍ່ຊີວິດ:</u>**

ບົດຮຽນນີ້ສາມາດຊ່ວຍທ່ານໃນການປະຕິບັດຕົນທີ່ຈະນຳຜົນປໂຍດໃຫ້ແກ່ຜູ້ອື່ນແລະເປັນການນຳສະງ່າຣາສີໃຫ້ແກ່ພຣະເຈົ້າ.

**<u>ເປົ້າໝາຍຂອງບົດຮຽນນີ້:</u>**

ບົດຮຽນນີ້ແມ່ນກ່ຽວກັບຄວາມມີສິດເສຣີພາບແລະຄວາມຕ້ອງການຂອງຄຣິສຕຽນຜູ້ທີ່ມີຄວາມເຊື່ອທີ່ຈະສະແດງຄວາມຮັກດ້ວຍຄວາມດີແລະຄວາມຍິ່ງໃຫ່ຍຂອງພຣະເຈົ້າໃນຄວາມເຂົ້າໃຈ.

**<u>ຄວາມສຳຄັນຂອງບົດຮຽນ:</u>**

ບົດຮຽນນີ້ແມ່ນມີຄວາມສຳຄັນຫຼາຍເພາະວ່າຫຼາຍໆຄັ້ງຄຣິສຕຽນເຮົາມີປາກົດການຂອງການເຫັນແກ່ຕົວ, ຢືນຢັນວ່າເຂົາເຮັດຖືກຕ້ອງ ໂດຍບໍ່ໄດ້ຄຳນຶງເຖິງການປະພຶດປະຕິບັດຂອງຕົນວ່າມັນສ້າງຄວາມກະທົບກະເທືອນຕໍ່ຄົນອື່ນຢ່າງໃດ. ໝາຍຄວາມວ່າເຂົາໄດ້ຢຸດເພື່ອຈະພິຈາຣະນາຕົວເອງວ່າການກະທຳຂອງເຂົາຈະຖວາຍພຣະກຽດແລະການສັນເສີນໃຫ້ແກ່ພຣະເຈົ້າ. ບົດຮຽນນີ້ໃຫ້ຂໍ້ແນະນຳເຮົາເຖິງຂໍ້ໃຫຍ່ໃຈຄວາມໃນພຣະຄັມພີເພື່ອເຮັດໃຫ້ເຮົາມີຈິດໃຈກວ້າງຂວາງໃນການພິຈາຣະນາເສີມສ້າງຜູ້ໃດຜູ້ນຶ່ງຂຶ້ນໃຫ້ເປັນທີ່ຖວາຍກຽດແດ່ພຣະເຈົ້າ.

ນາງແອຣິສ, *"ໄປກາສິໂນໃໝ່ກັນເຖາະ, ຂ້ອຍຕ້ອງການຢາກໄດ້ຍິນສຽງເພງຂອງນັກຮ້ອງຢູ່ທີ່ນັ້ນ."* ແຄຣາໄດ້ເວົ້າຕອບໄປວ່າ,*"ຂ້ອຍບໍ່ຮູ້ວ່າເຮົາກຳລັງຈະໄປກາສິໂນ. ຂ້ອຍບໍ່ເຊື່ອຄຣິສຕຽນຈະຫຼິ້ນການພະນັນ."*ແອຣິສຕອບໃນທັນທີທັນໃດວ່າ,*"ໂອ, ພວກເຮົາບໍ່ໄດ້ຫຼິ້ນການພະນັນ. ພວກເຮົາພຽງແຕ່ໄປເບິ່ງການສະແດງດົນຕຣີ."*

ເພື່ອພຣະຄຣິດ ຄຣິສຕຽນບໍ່ສົມຄວນຈະເຮັດສິ່ງນຶ່ງສິ່ງໃດທີ່ຈະເປັນການສະດຸດໃຈໃນການເປັນພະຍານຂອງເຮົາ. ນອກຈາກການພະນັນ, ມີການປະພຶດຢ່າງໃດອີກແດ່ທີ່ເປັນການຕໍ່ສູ້ກັນໃນກຸ່ມຄຣິສຕຽນເຮົາໃນທຸກວັນນີ້? ບົດຮຽນນີ້ໄດ້ສອນໃຫ້ເຮົາຮຽນຮູ້ການຫລີກລ້ຽງຈາກການປະພຶດຕົນທີ່ເຫັນແກ່ປໂຍດສ່ວນຕົວ. ພວກເຮົາຮຽນຮູ້ທີ່ຈະວາງໂຕໃຫ້ເປັນແບບຢ່າງແກ່ຄົນອື່ນແລະເປັນທີ່ຖວາຍກຽດແດ່ພຣະເຈົ້າ.

## <u>ສຶກສາພຣະຄັມພີ</u>

### 1 <u>ຍອມຢູ່ໃນກົດລະບຽບ</u> 1 ໂກຣິນໂທ 8:1- 3

ຄຣິສຕຽນມີຫຼາຍວິທີທາງໃນການຕັດສິນໃຈ. ເຮົາມີຂໍ້ພຣະຄັມພີທີ່ເປັນຂໍ້ໃຫຍ່ໃຈຄວາມທີ່ສຳຄັນຊ່ວຍເຮົາໃນການຕັດສິນໃຈ. ເຮົາທຳຕາມກົດລະບຽບທຸກຢ່າງໃຫ້ເປັນທີ່ພໍໃຈໂດຍອຳນາດການປົກຄອງ. ພວກເຮົາພິຈາຣະນາເບິ່ງບໍ່ວ່າຈະເປັນເວລາອັນສັ້ນແລະເວລາຍາວເຖິງຜົນທີ່ຈະຕິດຕາມມາໃນການປະພຶດຕົວຂອງເຮົາ. ທ່ານໂປໂລໄດ້ປະເຊີນກັບຫຼາຍເຣື່ອງທີ່ເປັນບັນຫາຂອງຄຣິສຕະຈັກທີເມືອງໂກຣິນໂທ. ໃນການກ້າວຜ່ານບັນຫານີ້ທ່ານໄດ້ສຸມໃຈໃສ່ຈຸດທີ່ເປັນສ່ວນສຳຄັນທີ່ເຮັດໃຫ້ຄຣິສຕຽນຕັດສິນໃຈ. ຄຣິສຕຽນເມືອງໂກຣິນໂທພາກສ່ວນນຶ່ງແມ່ນໄດ້ຕັດສິນໃຈເຮັດໃນສິ່ງທີ່ຜິດເຫດຜົນກຳເພາະວ່າເຂົາຕິດຕາມຄຳສອນທີ່ຜິດ.

ໂດຍສະເພາະກັບສິ່ງທີ່ເກີດຂຶ້ນເປັນທີ່ຍອມຮັບວ່າຄຣິສຕຽນເຫຼົ່ານີ້ບໍ່ໄດ້ຄຳນຶງວ່າຈະມີສິ່ງໃດເກີດຂຶ້ນກໍຕາມພວກເຂົາສາມາດກິນ **ອາຫານທີ່ຖວາຍບູຊາພຣະທຽມ**. ພວກເຮົາບໍ່ປະເຊີນໜ້າກັບບັນຫາຂອງການຮຽກຮ້ອງຕ້ອງການທີ່ເກີດຂຶ້ນໃນທຸກວັນນີ້, ແຕ່ພວກເຮົາປະເຊີນກັບຄວາມສລັບຊັບຊ້ອນຂອງບັນຫາທີ່ບໍ່ຕົງຕາມຂໍ້ພຣະຄຳໃນພຣະຄັມພີ. ຂ້າພຣະເຈົ້າສນັບສນຸນນັກຮຽນກຸ່ມນ້ອຍໆຂອງພຣະເຈົ້າທີ່ຍັງບໍ່ເປັນຄຣິສຕຽນສົມບູນແບບເທື່ອ ໃຫ້ຊອກຫາຫຼັກພື້ນຖານຂອງຄວາມເຊື່ອທີ່ຈະເປັນເຂັມຊີ້ທາງໃຫ້ເຂົາໃນການຕັດສິນໃຈຂອງເຂົາໃນທຸກວັນນີ້. ຄຣິສຕຽນບາງພາກສວນທີ່ເມືອງໂກຣິນໂທໄດ້ອ້າງອີງເອົາຄວາມຮູ້ຄວາມສາມາດເປັນພື້ນຖານຂອງເຂົາໃນການຕັດສິນໃຈຂອງເຂົາມັນກໍດີຢູ່ ອັນທີ່ຕິດຕາມມາການຢູ່ກິນກໍໄດ້ເຮັດຕາມປະເພນີຂອງຜູ້ທີ່ບໍ່ເຊື່ອໃນພຣະເຈົ້າ ອາຫານທີ່ມາຈາກການຖວາຍບູຊາ. ໃນປໂຍກທີ່ມີເຄື່ອງໝາຍຂໍ້ຄຳຖາມໃນຂໍ້ນີ້ງຕາມປົກກະຕິແລ້ວສະແດງໃຫ້ເຫັນວ່າ ຄຣິສຕຽນໃຊ້ເປັນຄຳຖາມໃຈຕົນເອງຢູ່ສເມີ.

ທ່ານໂປໂລຢືນຢັນວ່າຄວາມ **ຮັກ** ຂອງຄຣິສຕຽນແມ່ນຢູ່ເໜືອພື້ນຖານຂອງການຕັດສິນໃຈ. ຄວາມຮູ້ຄວາມສາມາດມັກຊັກນຳເຮົາໃຫ້ເກີດຄວາມຍິ່ງຈອງຫອງ, ແຕ່ວ່າຄວາມຮັກເສີມສ້າງຄຣິສຕະຈັກ. ຄວາມຮັກຂອງຄຣິສຕຽນ, ຮັກທີ່ເກີດຈາກຄວາມຕັ້ງໃຈ, ເປັນຄວາມຮັກທີ່ບໍ່ເຫັນແກ່ໂຕ, ໄດ້ອະທິບາຍເຖິງການວາຍພຣະຊົນແລະການຄືນພຣະຊົນຂອງອົງພຣະເຢຊູຄຣິດ. ນັກຄົ້ນຄວ້າພຣະຄັມພີໃຫ້ຂໍ້ສັງເກດວ່າທ່ານໂປໂລໄດ້ໃຊ້ສອງຄວາມໝາຍທີ່ແຕກຕ່າງກັນໃນຄຳທີ່ວ່າຄວາມຮູ້ໃນທີ່ນີ້. 1 ທ່ານໃຊ້ຄຳວ່າຊັກຊວນໃຫ້ໃຊ້ຄວາມຮູ້ຄວາມສາມາດເຂົ້າໃນການຄົ້ນຄວາມຈິງ. 2 ທ່ານໃຫ້ຂໍ້ແນະນຳທີ່ສຳຄັນທີ່ສຸດ, ປະສົບການຄວາມຮູ້ຄວາມສາມາດ, ຄວາມຮູ້ຄວາມສາມາດທີ່ແທ້ຈິງຂອງພຣະເຈົ້າເປັນທີ່ມາຂອງສະຕິປັນຍາ, ບໍ່ເຫັນແກ່ຕົວ, ບໍ່ອວດອົ່ງ.

**2. <u>ຈົ່ງຫຼີກໜີຈາກສິ່ງທີ່ຖ່ວງດຶງຄວາມຈະເຣີນ</u>.** 1 ໂກຣິນໂທ 8:4, 7- 13

ພວກເຮົາຢູ່ໃນສັງຄົມທີ່ຄົນທັງຫຼາຍຮຽກຮ້ອງສິດທິຂອງເຂົາ. ພວກເຮົາມີສິດທິຂອງປະຊາຊົນທີ່ຈະໄດ້ຮັບຄວາມປົກປ້ອງຈາກຣັຖບານ, ແຕ່ວ່າໃນສັງຄົມປັດຈຸບັນນີ້ໄດ້ສນັບສນຸນໃນການສະແດງສິດທິຂອງບຸກຄົນຫຼາຍເກີນໄປຈົນເປັນສາຍເຫດໃຫ້ເກີດມີບັນຫາຢູ່ເລື້ອຍໆ.

ຄຣິສຕຽນຜູ້ທີ່ອ້າງສິດທິເພື່ອກິນອາຫານທີ່ບູຊາແກ່ພຣະທຽມນັ້ນດ້ວຍພື້ນຖານຄວາມຮັບຮູ້ວ່າພຣະທຽມບໍ່ເປັນຂອງແທ້. ຄວາມຮັບຮູ້ທາງສາສນາຂອງເຂົາກໍຖືກ, ເພາະວ່າມີພຣະເຈົ້າແຕ່ອົງດຽວເທົ່ານັ້ນ. ເຂົາຕັດສິນໃຈທີ່ຈະກິນຊີ້ນທີ່ນຳມາຖວາຍແກ່ພຣະທຽມ, ເຖິງຢ່າງໃດກໍຕາມ, ນັ້ນແມ່ນເປັນການໃຊ້ສິດເສຣີພາບຂອງການເປັນຄຣິສຕຽນທີ່ຜິດ. ໃນການມີສິດເສຣີພາບຫຼາຍນັ້ນກໍບໍ່ໄດ້ເປັນທີ່ກະຕຸ້ນໃຈໃຫ້ກັບຄຣິສຕຽນຜູ້ມີສິດເສຣີພາບນ້ອຍໃນໂກຣິນໂທ. ຜູ້ຊຶ່ງໄດ້ຮັບຄວາມທຸກຮ້ອນໃຈໃນເຣື່ອງນີ້.

ທ່ານໂປໂລຕ້ອງການໃຫ້ຄຣິສຕຽນຜູ້ຊຶ່ງກິນອາຫານຈາກແທ່ນບູຊາທີ່ນຳໄປຖວາຍແກ່ພຣະທຽມນັ້ນໄດ້ຈົດຈຳໄວ້ວ່າເຂົາບໍ່ໄດ້ແບ່ງປັນຄວາມຮູ້ອັນໃດເລີຍໃຫ້ແກ່ຄຣິສຕຽນຄົນອື່ນ. ເປັນຄຣິສຕຽນທີ່ບໍ່ຈະເຣີນເຕີບໂຕ, ຄວາມເປັນໜ້າເຊື່ອຖືເຂົາມີນ້ອຍ, ເຂົາຍັງມີຄວາມກັງວົນຫ່ວງໃຍນຳພຣະທຽມທີ່ເຂົາເຄີຍຂາບໄຫວ້ມາກ່ອນ. ຄວາມຮູ້ສຶກຜິດແລະຊອບຂອງຜູ້ທີ່ອ່ອນແອໃນພວກເຂົານັ້ນໄດ້ກາຍມາເປັນຄວາມຜິດທີ່ນຳຄວາມຈິບຫາຍໃຫ້ເຂົາ ໂດຍຄຣິສຕຽນທີ່ຖືວ່າຕົນມີອິສຣະເດີນໂອ້ອວດການມີເສຣີພາບຂອງຕົນ.

ການຕັດສິນໃຈມັນກໍມີການກ່ຽວພັນກັບການມີສິດທິ. ທ່ານໂປໂລໄດ້ເຕືອນສະຕິຜູ້ອ່ານຂອງເພິ່ນວ່າການຖົກຖຽງກັນກ່ຽວເຣື່ອງອາຫານນັ້ນບໍ່ໄດ້ເປັນບັນຫາໃຫ່ຍ. ພວກເຮົາບໍ່ຄວນຕີຣາຄາຕົວເຮົາເອງຫຼືຄົນອື່ນໆວ່າເຮົາກິນຫຍັງ. ຄຣິສຕຽນທີ່ໄດ້ຮັບອິສຣະພາບຫຼາຍແລ້ວກໍຄິດວ່າຄຣິສຕຽນໃໝ່ຍັງບໍ່ຈະເຣີນເຕີບໃຫຍ່, ແລະຄຣິສຕຽນຜູ້ມີອິສຣະພາບນ້ອຍກໍຄິດວ່າຄົນອື່ນນັ້ນເປັນຜູ້ຍິ່ງຈອງຫອງ.

ນຶ່ງໃນບັນຫາຂອງຄຣິສຕະຈັກທີ່ໂກຣິນໂທນັ້ນແມ່ນເສຣີພາບ. ຄຳທີ່ວ່າເສຣີພາບໃນຂໍ້ 9 ນີ້ແມ່ນໄດ້ຖືກນຳມາໃຊ້ຫຼາຍໃນຈົດໝາຍຂອງທ່ານໂປໂລ (9:4,5,6,12,18; 11:10; 15:24). ມັນສາມາດແປອອກມາເປັນຄຳວ່າ "ອິສຣະ" ຫຼື "ອຳນາດ" ຫຼືວ່າ "ກຳລັງ" ໃນຂະນະທີ່ເຮົາມີອິສຣະພາບໃນພຣະເຈົ້າ (ຄາລາເຕັຽ 5:1), ພວກເຮົາຄວນມີຄວາມລະມັດລະວັງໃນການໃຊ້ເສຣີພາບຂອງເຮົາ, ທ່ານໂປໂລກ່າວຢູ່ເລື້ອຍວ່າເສຣີພາບຂອງເຮົານັ້ນຄວນປະກອບດ້ວຍຄວາມຮັກ.

ສິດທິຂອງການສະແດງຄວາມຄິດເຫັນຂອງຂ້າພຣະເຈົ້າອາດຈະເປັນອຸປະສັກແກ່ຜູ້ມີຄວາມເຊື່ອໜ້ອຍ, ເຖິງແມ່ນວ່າການກະທຳຂອງຂ້າພຣະເຈົ້າອາດເປັນທີ່ຖືກຕ້ອງແລະໃຊ້ໄດ້ສຳລັບຂ້າພຣະເຈົ້າກໍຈິງຢູ່, ແຕ່ການກະທຳນັ້ນອາດເປັນຜົນກະທົບຫຼືບັນຫາຍຸ້ງຍາກໃຫ້ກັບຜູ້ທີ່ມີໃຈສຳນຶກຜິດແລະຊອບອ່ອນແອນັ້ນໄດ້, ເຫັນໄດ້ວ່າການກະທຳນັ້ນເປັນຜົນສະທ້ອນຕໍ່ຜູ້ທີ່ມີຄວາມເຊື່ອອື່ນໆອີກ.

ທ່ານໂປໂລໄດ້ເຕືອນສະຕິຄຣິສຕຽນເມືອງໂກຣິນໂທໃຫ້ທວນຄິດເຖິງເບື້ອງຕົ້ນທີ່ພຣະຄຣິດໄດ້ວາຍພຣະຊົນແທນຄຣິສຕຽນທັງຫຼາຍ, ການທຳໃຫ້ເປັນທີ່ຂຸ້ນເຄືອງໃຈລະຫວ່າງພີ່ນ້ອງຜູ້ທີ່ເຊື່ອໂດຍການກະທຳທີ່ບໍ່ມີຄວາມຮູ້ສຶກແມ່ນບາບ. ການຮຽກຮ້ອງສິດທິໃນການເຮັດບາງສິ່ງບາງຢ່າງເພາະຄວາມຮູ້ສູງກວ່າມັນຈະນຳໄປສູ່ການປະທະກັນໃນຄຣິສຕະຈັກ.

ທ່ານໂປໂລສັງເກດເຫັນວ່າຄວາມບາບທີ່ຕໍ່ຕ້ານເພື່ອນຄຣິສຕຽນດ້ວຍກັນນີ້ກໍເທົ່າກັບຄວາມບາບທີ່ຕໍ່ຕ້ານພຣະຄຣິດ. ໃນໜັງສືຕອນຕໍ່ໄປ ທ່ານໂປໂລໄດ້ສົມທຽບຄຣິສຕະຈັກຄືກັບພຣະກາຍຂອງພຣະຄຣິດ (1ໂກຣິນໂທ 12:12-13). ບາງທີທ່ານໂປໂລກໍອາດຈະຮູ້ດີໃນຄຳສອນຂອງພຣະເຢຊູ ທີ່ກ່າວວ່າການທຳດີເພື່ອຮັບໃຊ້ເພື່ອນມະນຸດດ້ວຍກັນມັນກໍເທົ່າກັບຮັບໃຊ້ພຣະຄຣິດຄືກັນ (ມັດທາຍ 25:31-46).

ຄຳແນະນຳຂອງທ່ານໂປໂລກ່ຽວກັບຄຣິສຕຽນທີ່ໃຊ້ສິດຮຽກຮ້ອງເພື່ອກິນອາຫານທີ່ເຂົາເອົາບູຊາພຣະທຽມນັ້ນບໍ່ເປັນພຽງແຕ່ກິນອາຫານຊື່ໆ. ແຕ່ມັນເປັນການທຳຜິດຕໍ່ເພື່ອນຄຣິສຕຽນດ້ວຍກັນ. ທ່ານໂປໂລຮູ້ດີວ່າເພິ່ນມີສິດຄືເປັນຜູ້ນຳພາຄິຣສຕຽນທີ່ເຕີບໂຕ, ແຕ່ເພິ່ນຈະບໍ່ມັກໃຊ້ສິດທິນັ້ນເພາະວ່າຄວາມຮັກຂອງເພິ່ນທີ່ມີຕໍ່ພຣະຄຣິດແລະຄຣິສຕະຈັກ. ທ່ານໂປໂລມັກຈະສມັກໃຈຈຳກັດເສຣີພາບສ່ວນຕົວຂອງເພິ່ນເພື່ອຈະນຳເອົາຄົນອື່ນມາເຖິງພຣະຄຣິດ. ທ່ານມັກຈະຫຼີກຈາກການກະທຳທີ່ຈະເຮັດໃຫ້ຜູ້ຟັງຂອງເພິ່ນເຂົ້າໃຈຜິດ (1 ໂກຣິນໂທ 9:19-23 )

> ທ່ານໂປໂລໄດ້ສອນກ່ຽວກັບບັນຫາເລື່ອງອາຫານທີ່ບູຊາແກ່ພຣະທຽມນັ້ນເບິ່ງຄືວ່າແປກປລາດໃຫ້ກັບຜູ້ອ່ານໃນທຸກມື້ນີ້. ນອກໄປກວ່ານັ້ນຫລັກການຂອງເພິ່ນກໍຍັງກົມກຽວກັນຢູ່. ພວກເຮົາບໍ່ຄວນເມີນເສີຍຕໍ່ອິສຣະໃນພຣະຄຣິດໂດຍສະເພາະເມື່ອການກະທຳຂອງເຮົາເປັນເຫດໃຫ້ຄົນອື່ນສະດຸດໃຈ. ການກະທຳຂອງເຮົາຄວນຈະເຮັດດ້ວຍຄວາມຮັກ. ພວກເຮົາຄວນຊອກຫາເບິ່ງແຕ່ສິ່ງທີ່ດີຈາກຄົນອື່ນ.

ຄຣິສຕຽນຈະສົມຄວນເບິ່ງຮູບເງົາໃນລະດັບເຣດອາ(R) ບໍ່? ຄຣິສຕຽນບາງຄົນກໍບໍ່ເບິ່ງຮູບເງົາເລີຍ, ບາງຄົນກໍບໍ່ເລືອກເລື່ອງເບິ່ງໂດຍບໍ່ໄດ້ຄຳນຶງເຖິງວ່າມັນຈະເປັນຜົນສະທ້ອນຕໍ່ການເປັນພະຍານໃຫ້ກັບຜູ້ທີ່ເຊື່ອນ້ອຍຫຼືຜູ້ທີ່ບໍ່ເຊື່ອເລີຍ. ຄວາມຕຶງຄຽດລະຫວ່າງສິດທິ, ຄວາມຮູ້ແລະຄວາມຮັກຍັງສືບຕໍ່ເປັນສູນກາງໃນການຕັດສິນໃຈຂອງຄຣິສຕຽນຢູ່.

**3.<u>ເຮັດທຸກສິ່ງເພື່ອຖວາຍກຽດພຣະເຈົ້າ</u>.** 1 ໂກຣິນໂທ 10:31- 33

ຄຣິສຕຽນທີ່ເມືອງໂກຣິນໂທຈຳນວນຫຼວງຫຼາຍໄດ້ຍິນໄດ້ຟັງຈາກທ່ານໂປໂລວ່າໃນພວກເຂົາໄດ້ມີຫຼາຍຄົນອ້າງວ່າເຂົາມີອິສລະພາບທີ່ຈະເຮັດໄດ້ທຸກສິ່ງ. ຄຣິສຕຽນເຫຼົ່ານີ້ໃຊ້ຄຳຂວັນທີ່ວ່າ"ເຮົາເຮັດໄດ້ທຸກສິ່ງບໍ່ມີໃຜຫ້າມ"(10:23). ທ່ານໂປໂລໄດ້ຕອບໂຕ້ເຂົາຢ່າງໜັກໂດຍກ່າວວ່າທຸກຄົນຄວນຊອກສແວງຫາສິ່ງທີ່ດີໃຫ້ແກ່ຜູ້ອື່ນບໍ່ແມ່ນຈະມອງເຫັນແຕ່ການໃຊ້ສິດເສຣີພາບໃນທາງທີ່ຜິດ. ຫັນກັບຄືນມາຫາບັນຫາທີ່ກ່ຽວກັບອາຫານທີ່ຖວາຍໃຫ້ພຣະທຽມ, ໃນຊີວິດຂອງ

ເຂົາອາດຈະໄດ້ປະເຊີນກັບສະຖານະການແບບນີ້ແລະຜູ້ທີ່ໄດ້ຍິນໄດ້ຟັງຈາກທ່ານໂປໂລໃນເວລານັ້ນກໍອາດມີປະສົບການໃນເຣື່ອງນີ້ມາແລ້ວ(10:25-30).

ໃນທີ່ສຸດ, ຄຣິສຕຽນຕ້ອງມີຄວາມມຸ້ງໝັ້ນຢ່າງໜັກໃນຄວາມຈິງໃຈແລະເຮັດທຸກສິ່ງໃຫ້ເປັນທີ່ພໍພຣະທັຍພຣະເຈົ້າ. ເຮົາຕ້ອງ**ເຮັດທຸກສິ່ງໃຫ້ເປັນທີ່ຖວາຍກຽດແກ່ພຣະເຈົ້າ.**

ເມື່ອເຮົາປະເຊີນກັບບັນຫາໃນການຕັດສິນໃຈ, ເຮົາສົມຄວນຈະຖາມຕົວເຮົາເອງວ່າເຮົາຄວນປະພຶດປະຕິບັດຕົວຢ່າງໃດຈຶ່ງຈະເປັນທີ່ຊອບພຣະທັຍຂອງພຣະເຈົ້າ. ເຖິງແມ່ນວ່າເຮົາບໍ່ໄດ້ມີເຈດຕະນາເຮັດໃຫ້ຄົນອື່ນຂັ**ດເຄືອງໃຈ**ກໍຕາມ, ທ່ານໂປໂລຍັງໄດ້ເຕືອນສະຕິເຮົາໃຫ້ຫຼີກລ້ຽງຈາກການເປັນຕົ້ນເຫດເຮັດໃຫ້ຄົນອື່ນຄັດເຄືອງໃຈ. ຄຣິສຕຽນຈຳນວນນຶ່ງໃນໂກຣິນໂທໄດ້ໃຊ້ສິດເສຣີພາບຂອງເຂົາໄປໃນທາງທີ່ບໍ່ຖືກຕ້ອງ, ເປັນເຫດໃຫ້ຄຣິສຕຽນທີ່ມີຄວາມເຊື່ອຢຸດໆຍ່ອນໆນັ້ນສະດຸດໃຈ. ທ່ານໂປໂລບໍ່ຕ້ອງການໃຫ້ຜູ້ໃດຜູ້ນຶ່ງຕ້ອງຂັດເຄືອງໃຈກັນແລະກັນໃນຄຣິສຕະຈັກ.

ທ່ານໂປໂລກະທຳເຊັ່ນນີ້ກໍເພື່ອຜົນປໂຍດໃນການນຳຄົນທີ່ບໍ່ເຊື່ອໃຫ້ມາເຖິງຄວາມພົ້ນແລະຮູ້ຈັກກັບພຣະເຢຊູຄຣິດເຈົ້າ. ທ່ານມີຄວາມຕ້ອງການເຮັດທຸກສິ່ງໃຫ້ເປັນທີ່ພໍໃຈຂອງຄົນທັງປວງເພາະເພິ່ນມີຄວາມຮູ້ສຶກວ່ານີ້ແມ່ນພຣະປະສົງຂອງພຣະເຈົ້າ. ທ່ານບໍ່ໄດ້ມີເຈດຕະນາທີ່ຈະເຮັດໃຫ້ເຂົ້າຕ້ອງຂັດເຄືອງໃຈກັນໃນເຣື່ອງເລັກເຣື່ອງນ້ອຍທີ່ອາດຈະສົ່ງຜົນກະທົບກະເທືອນເຖິງເຣື່ອງໃຫຍ່. ຄືການໄດ້ຮູ້ຈັກກັບພຣະເຢຊູຄຣິດແລະຄວາມລອດພົ້ນ.

## <u>ບົດຮຽນແຫ່ງຊີວິດ</u>

ການຕັດສິນໃຈຂອງພວກເຮົາແມ່ນຂຶ້ນຢູ່ກັບຈຸດປະສົງ. ເຮົາອາດຈະປະຕິບັດຕາມກົດລະບຽບຂອງບ້ານເມືອງເພື່ອຫຼີກເວັ້ນຈາກການຖືກລົງໂທດ. ເຮົາອາດຈະຕ້ອງການຄວາມຍົກຍ້ອງຈາກຄົນອື່ນ. ທ່ານໂປໂລໄດ້ເວົ້າແລ້ວເວົ້າອີກວ່າການຕັດສິນໃຈຂອງຄຣິສຕຽນຕ້ອງປະກອບດ້ວຍຄວາມຮັກຂອງພຣະຄຣິດໃນການນຳພາການຕັດສິນໃຈຂອງພວກເຂົາ. ພວກເຮົາຄວນຫຼີກລ້ຽງຈາກການໂອ້ອວດສິດເສຣີພາບຂອງເຮົາໃນພຣະຄຣິດແລະກໍຫຼີກຈາກການເປັນຕົ້ນເຫດເຮັດໃຫ້ຄົນອື່ນສະດຸດໃຈ. ທີ່ເວົ້າຂ້າງເທິງນີ້, ພວກເຮົາຕ້ອງເຮັດທຸກວິທີທາງໃນການຊອກຫາການຖວາຍການສັຣເສີນພຣະເຈົ້າໃນທຸກສິ່ງການກະທຳຂອງເຮົາ. ເມື່ອທຸກການປະພຶດປະຕິບັດທຸກຢ່າງຫາກາຍມາເປັນຈຸດເດັ່ນໃນຕົວເຮົາ, ເຮົາກໍຄ້າຍຄືກັບພຣະຄຣິດຂຶ້ນເລື້ອຍໆ.

ເຮົາໄດ້ຮຽນຮູ້ຫຍັງແດ່ຈາກການແນະນຳຂອງທ່ານໂປໂລທີ່ມີຕໍ່ຄຣິສຕຽນທີ່ເມືອງໂກຣິນໂທ?

- ❖ ການຕັດສິນໃຈທີ່ຈະອາສັຍແຕ່ຄວາມຮູ້ນັ້ນແມ່ນບໍ່ພຽງພໍ. ຖ້າອັນໃດເຮົາກໍຮູ້ຈັກໝົດມັກຈະນຳພາໃຫ້ເຮົາກ້າວເຂົ້າໄປສູ່ການຕັດສິນໃຈທີ່ຜິດໄດ້.
- ❖ ການຕັດສິນໃຈຂອງຄຣິສຕຽນຕ້ອງປະກອບດ້ວຍຄວາມຮັກ.
- ❖ ການໃຊ້ສິດວ່າເຮົາ "ຖືກຕ້ອງຢູ່ສເມີ" ນັ້ນມັກຈະເຮັດໃຫ້ເກີດຄວາມເສັຽຫາຍຢ່າງໃຫຍ່ຫຼວງເພາະມັນຈະເປັນການທຳລາຍການມີສາຍສຳພັນຂອງເຮົາກັບຄົນອື່ນ.
- ❖ ພວກເຮົາຄວນຊອກສແວງຫາແຕ່ວິທີທາງຈະນຳຄວາມດີມີຜົນປໂຍດສຳລັບຜູ້ອື່ນ.
- ❖ ຄວາມໂຄຣົບນັບຖືພຣະເຈົ້າຄວນເປັນເຈດຕະນາອັນສູງສົ່ງຂອງຄຣິສຕຽນໃນການດຳລົງຊີວິດ. ການປະພຶດປະຕິບັດທຸກຢ່າງຢູ່ທີ່ໂບດ, ໃນທີ່ທຳງານ ໃນໂຮງຈັກໂຮງງານ, ໃນຄອບຄົວແລະຢູ່ໃນວົງສັງຄົມບ່ອນອື່ນໆຄວນເປັນການປະພຶດປະຕິບັດອັນດຽວກັນເພື່ອເປັນການຖວາຍກຽດແກ່ພຣະເຈົ້າ

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ WWW.lsbf.org ໂດຍ LLBC.**